ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ກຳມາທິການຍຸຕິທຳ

ສະພາປະຊາຊົນ ແຂວງຫຼວງພະບາງ
ເລກທີ: 112
ລົງວັນທີ: 08.08.2019
ຂາເຂົ້າ

ເລກທີ 391 /ກມຍທ

ນະຄອນຫຼວງວຽງຈັນ, ວັນທີ 07.08.2019.

# ແຈ້ງການ

**ຮຽນ :** ທ່ານ ປະທານສະພາປະຊາຊົນແຂວງຫຼວງພະບາງ ທີ່ນັບຖື.

**ເລື່ອງ:** ການລົງຕິດຕາມກວດກາຄຳຮ້ອງຂໍຄວາມເປັນທຳ.

- ອີງຕາມ ກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016,
- ອີງຕາມ ມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກຳມາທິການ ຍຸຕິທຳ ສະບັບເລກທີ 0129/ຄປຈ, ລົງວັນທີ 07 ກັນຍາ 2016.

ກຳມາທິການຍຸຕິທຳ ສະພາແຫ່ງຊາດ ຂໍຖືເປັນກຽດແຈ້ງການມາຍັງທ່ານ ປະທານສະພາປະຊາຊົນ ແຂວງຫຼວງພະບາງ ກ່ຽວກັບການລົງຕິດຕາມກວດກາຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ປະກອບມີ: ຄະດີແພ່ງ ລະຫວ່າງ: ນາງ ສີທາ ທ່າວ (ໂຈດ) ແລະ ທ້າວ ຄຳພຸຍ (ຈຳເລີຍ) ກ່ຽວເລື່ອງ: ທວງກຳມະສິດທີ່ດິນ, ຄະດີແພ່ງລະຫວ່າງ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແລະ ນາງ ບຸນທັນ ລັກປະສິດ (ຈຳເລີຍ) ກ່ຽວເລື່ອງ: ທວງເອົາກຳມະສິດທີ່ດິນ ແລະ ຄະດີແພ່ງລະຫວ່າງ ທ້າວ ຈອມສີ (ໂຈດ) ແລະ ທ້າວ ນໍ່ຊົ່ງເຮີ (ຈຳເລີຍ) ກ່ຽວເລື່ອງ: ຂໍ້ຂັດແຍ່ງກ່ຽວກັບ ກຳມະສິດທີ່ດິນ ຊຶ່ງຜ່ານການກວດກາ, ຄົ້ນຄວ້າ ແລະ ພິຈາລະນາຂອງ ກຳມາທິການຍຸຕິທຳ ເຫັນວ່າຍັງມີຫຼາຍບັນຫາທີ່ ຍັງບໍ່ທັນຄົບຖ້ວນ, ພາວະວິໄສ ແລະ ບັນດາຄຳຮ້ອງດັ່ງກ່າວພວມຈະຖືກຈັດຕັ້ງປະຕິບັດຕາມຄຳຕັດສິນຂອງສານ, ປັດຈຸບັນນີ້ກຳມາທິການຍຸຕິທຳ ໄດ້ມີແຜນການລົງຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ບັນດາຄຳຮ້ອງຄືນໃໝ່ ຊຶ່ງກຳລັງ ຂໍທິດຊີ້ນຳຈາກຄະນະປະຈຳສະພາແຫ່ງຊາດ ເພື່ອຂໍອະນຸມັດລົງເຄື່ອນໄຫວຕິດຕາມກວດກາ ແລະ ເກັບກຳຂໍ້ມູນ.

ດັ່ງນັ້ນ, ກຳມາທິການຍຸຕິທຳ ສະພາແຫ່ງຊາດ ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ຊາບ ແລະ ລໍຖ້າການລົງເກັບກຳຂໍ້ມູນເພີ່ມຕື່ມ ກ່ອນການຈັດຕັ້ງປະຕິບັດ.

**ປະທານກຳມາທິການຍຸຕິທຳ.**

ສະພາແຫ່ງຊາດ ກຳມາທິການຍຸຕິທຳ

ດຣ. ບົວຄຳ ທິບພະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

..........................................................

ສະພາປະຊາຊົນແຂວງຫລວງພະບາງ

ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ

ເລກທີ 104 /ຄຍປປ.

ວັນທີ 14 ສິງຫາ 2019.

# ໜັງສືສະເໜີ

ຮຽນ: ທ່ານ ຫົວໜ້າ ພະແນກຍຸຕິທຳແຂວງຫຼວງພະບາງ ທີ່ນັບຖື!

ເລື່ອງ: ໃຫ້ຄົ້ນຄ້ວາ, ພິຈາລະນາ ໃຫ້ລໍຖ້າການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

- ອີງຕາມ ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບເລກທີ 05/ສພຊ, ລົງວັນທີ 9 ພະຈິກ 2016.
- ອີງຕາມ ແຈ້ງການ ຂອງສະພາແຫ່ງຊາດ (ກຳມາທິການຍຸຕິທຳ) ເລກທີ 391/ກມຍທ, ລົງວັນທີ 07 ສິງຫາ 2019.
- ອີງຕາມ ທິດຊີ້ນຳ ຂອງຄະນະປະຈຳສະພາປະຊາຊົນແຂວງຫຼວງພະບາງ ວັນທີ 14 ສິງຫາ 2019.

ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງຫຼວງພະບາງ, ຖືເປັນກຽດສະເໜີມາຍັງທ່ານ ເພື່ອຄົ້ນຄ້ວາ, ພິຈາລະນາ ໃຫ້ລໍຖ້າການຈັດຕັ້ງປະຕິບັດຄຳຕັດສິນຂອງສານດັ່ງນີ້.

1. ຄະດີ ລະຫວ່າງ: ທ້າວ ຄຳພຸຍ ປັນຍາດາ (ໂຈດ) ກັບ ນາງ ສີຫາທ່າວ ( ຈຳເລີຍ) ກ່ຽວເລື່ອງ: ທວງເອົາກຳມະສິດທີ່ດິນ.

2. ຄະດີ ລະຫວ່າງ: ທ້າວ ເພັດຈຳພອນ ( ໂຈດ ) ກັບ ນາງ ບຸນທັນ ລັກປະສິດ (ຈຳເລີຍ) ກ່ຽວເລື່ອງ: ຂໍ້ຂັດແຍ່ງກ່ຽວກັບທີ່ດິນ.

3. ຄະດີ ລະຫວ່າງ: ທ້າວ ຈອມສີ ( ໂຈດ ) ກັບ ທ້າວ ບໍ່ຊົ່ງເຮີ (ຈຳເລີຍ) ກ່ຽວເລື່ອງ: ຂໍ້ຂັດແຍ່ງກ່ຽວກັບກຳມະສິດທີ່ດິນ.

ຕໍ່ກັບຄະດີທັງສາມລາຍທີ່ກ່າວມາຂ້າງເທິງນັ້ນ ທາງສະພາແຫ່ງຊາດ (ກຳມາທິການຍຸຕິທຳ) ຈະໄດ້ລົງຕິດຕາມກວດກາ, ເກັບກຳຂໍ້ມູນໃນຄະດີດັ່ງກ່າວ ສະນັ້ນກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ 3 ຄະດີດັ່ງກ່າວນັ້ນ, ແມ່ນສະເໜີໃຫ້ທ່ານ ລໍຖ້າການລົງຕິດຕາມກວດກາ ຂອງສະພາແຫ່ງຊາດ ( ກຳມາທິການຍຸຕິທຳ ) ຕາມແຈ້ງການ ເລກທີ 391/ກມຍທ, ລົງວັນທີ 07 ສິງຫາ 2019 ທີ່ໄດ້ຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງຖືເປັນກຽດສະເໜີຮຽນມາຍັງທ່ານ ເພື່ອຄົ້ນຄ້ວາ, ພິຈາລະນາດ້ວຍ.

ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ

ປະທານ

ພອນເລີດ ໄຊຍະນາ

+ ບ່ອນສົ່ງ:
- ພະແນກຍຸຕິທຳແຂວງ (ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ) 1 ສະບັບ.
- ສຳເນົາ 2 ສະບັບ.